| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດລົງທຶນ ສໍາລັບ ທຸລະກິດສໍາປະທານ | |
| ປະເພດຂອງໃບອະນຸຍາດ | ອື່ນໆ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPI-IPD-2 | 27.12.2017 | ກົມສົ່ງເສີມການລົງທຶນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | A - ກະສິກໍາ, ປ່າໄມ້ ແລະ ການປະມົງ, B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ, D - ການສະໜອງໄຟຟ້າ, ອາຍແກັສ, ອາຍຮ້ອນ ແລະ ອາກາດປັບແຕ່ງ, K - ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ, ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ກິດຈະການສໍາປະທານ ແມ່ນກິດຈະການທີ່ມີຄວາມສໍາຄັນຫລວງຫລາຍຕໍ່ເສດຖະກິດຂອງ ສປປ ລາວ ເຊັ່ນ ກິດຈະການໄຟຟ້າ, ບໍ່ແຮ່, ກະສິກໍາ ແລະ ອື່ນໆ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ມີການຂໍອະນຸຍາດໃນການລົງທຶນໃນກິດຈະການດັ່ງກ່າວ ເພື່ອຮັບປະກັນຜົນປະໂຫຍດສູງສຸດ ແລະ ຜົນກະທົບໜ້ອຍທີ່ສຸດໃນການລົງທຶນໃນກິດຈະການຕ່າງໆ ເຫລົ່ານັ້ນ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນໃນກິດຈະການ ສໍາປະທານ ຊຶ່ງແມ່ນ ກິດຈະການທີ່ຜູ້ລົງທຶນໄດ້ຮັບອະນຸຍາດໃນການສໍາປະທານຈາກລັດ ເພື່ອພັດທະນາ ແລະ ດໍາເນີນທຸລະກິດໃດໜຶ່ງ ເຊັ່ນ ການສໍາປະທານທີ່ດິນ, ການສໍາປະທານສາຍການບິນ, ການຂຸດຄົ້ນບໍ່ແຮ່ ແລະ ການພັດທະນາແຫລ່ງພະລັງງານໄຟຟ້າ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.Investlao.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 65 | 1. ຫ້ອງການບໍລິການປະຕູດຽວ ຕ້ອງສົ່ງເອກະສານຄໍາຮ້ອງໄປຂໍຄໍາເຫັນນໍາຂະແໜງການ ແລະ ທ້ອງຖິ່ນ ພາຍໃນ 2 ວັນລັດຖະການ ເພື່ອຄົ້ນຄວ້າ ຕອບພາຍໃນ 30 ວັນລັດຖະການ 2. ພາຍຫລັງມີຄໍາເຫັນຈາກຂະແໜງການ, ນໍາສະເໜີການລົງທຶນຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນພິຈາລະນາຫລັກການ ໃນ 30 ວັນລັດຖະການ 3. ພາຍຫລັງຄະນະກໍາມະການຕົກລົງເຫັນດີທາງດ້ານຫລັກການແລ້ວ, ຫ້ອງການບໍລິການປະຕູດຽວ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ແລະ ໃຫ້ຜູ້ລົງທຶນມາລົງນາມ 4. ພາຍຫລັງເຊັນສັນຍາສໍາປະທານແລ້ວ, ຫ້ອງການບໍລິການປະຕູດຽວ ຕ້ອງອອກໃບອະນຸຍາດ ພາຍໃນເວລາ 3 ວັນລັດຖະການ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຜູ້ຮ້ອງຂໍຕ້ອງມີປະສົບການ ແລະ ໄດ້ຮັບຜົນສໍາເລັດທາງດ້ານທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ, ຕ້ອງມີຖານະທາງດ້ານການເງິນ ຫລື ແຫລ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫລື ຕ່າງປະເທດ  2. ຜູ້ຮ້ອງຂໍ ຕ້ອງມີເງື່ອນໄຂ ແລະ ຄຸນະສົມບັດ ຕາມທີ່ກໍານົດໄວ້ສະເພາະ ສໍາລັບ ແຕ່ລະປະເພດ ກິດຈະການທີ່ຈະລົງທຶນ ເຊັ່ນ ກິດຈະການໄຟຟ້າ, ກິດຈະການບໍ່ແຮ່ 3. ຕ້ອງມີທຶນຈົດທະບຽນ ບໍ່ຫລຸດ 30 ສ່ວນຮ້ອຍຂອງທຶນທັງໝົດ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດ ກໍລະນີ ຜູ້ລົງທຶນບໍ່ຜ່ານຄຸນສົມບັດທີ່ກໍານົດໄວ້ສໍາລັບ ການດໍາເນີນກິດຈະການດັ່ງກ່າວ ຫລື ກໍລະນີທີ່ໜ່ວຍງານກ່ຽວຂ້ອງ ແຈ້ງປະຕິເສດການລົງທຶນ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 600 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ອາຍຸການລົງທຶນໃນກິດຈະການສໍາປະທານ ແມ່ນ ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ 50 ປີ ຈະຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫລື ສະພາແຫ່ງຊາດ ຫລື ສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດສິດ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 320000.00 | 50000.00 | 370000.00 |
| **ຄໍາເຫັນ** | ກົດໝາຍກ່ຽວຂ້ອງ (ລວມທັງ ລັດຖະບັນຍັດປະທານປະເທດ) ບໍ່ໄດ້ລະບຸຄ່າທໍານຽມ ແລະ ຄ່າບໍລິການໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ຄ່າບໍລິການ ແລະ ຄ່າທໍານຽມທັງໝົດ ແມ່ນ 370,000 ກີບ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 70000.00 | 30000.00 | 0.00 | 100000.00 |
| **ຄໍາເຫັນ** | ກົດໝາຍກ່ຽວຂ້ອງ (ລວມທັງ ລັດຖະບັນຍັດປະທານປະເທດ) ບໍ່ໄດ້ລະບຸຄ່າທໍານຽມ ແລະ ຄ່າບໍລິການໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ຄ່າບໍລິການ ແລະ ຄ່າທໍານຽມທັງໝົດ ສໍາລັບການຕໍ່ອາຍຸ ແມ່ນ 100,000 ກີບຕໍ່ເທື່ອ. | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) | 14/ສພຊ | 17.11.2016 | ໝວດທີ 4<br>ກົດຈະການການລົງທຶນສໍາປະທານ (ມາດຕາ 41 ຫາມາດຕາ 46) ມາດຕາ 52 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ |
| ສໍາເນົາໃບທະບຽນວິສາຫະກິດ |
| ສໍາເນົາພາດສະປອດຂອງອໍານວຍການ |

| ເອກະສານປະກອບ |
|---|
| ໃບແຈ້ງໂທດ |
| ສໍາເນົາບັດປະຈໍາຕົວ/ສໍາມະໂນຄົວຂອງອໍານວຍການ |
| ກົດລະບຽບວິສາຫະກິດ |
| ໃບຢັ້ງຢືນຖານະການເງິນ ແລະ ໃບລາຍງານບັນຊີສໍາຮອງຢູ່ທະນາຄານທີ່ມີການເຄື່ອນໄຫວຍ້ອນຫຼັງໄລຍະ 90 ວັນຂຶ້ນໄປ |
| ບົດວິພາກເສດຖະກິດເຕັກນິກ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ສັນຍາຮ່ວມຮຸ້ນ |
| ຊີວະປະຫວັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 7 | 0 |